ยินดีต้อนรับ

มาสู่ Washington Apple Health

ການຄຸ້ມກັນໂດຍປາສຈາກໂຄງການປິ່ນປົວທີ່ຖືກຄວບຄຸມນຳ

Washington Apple Health

Washington State Health Care Authority

[English] Language assistance services, including interpreters and translation of printed materials, are available free of charge. Call 1-800-562-3022 (TRS: 711).

[Amharic] የቋንቋ እገዛ አገልግሎት፣ አስተርጓሚ እና የሰነዶችን ትርጉም ጨምሮ በነጻ ይገኛል። 1-800-562-3022 (TRS: 711) ይደውሉ።

[Arabic] خدمات المساعدة في اللغات، بما في ذلك المترجمين الفوريين وترجمة المواد المطبوعة، متوفرة مجاناً، اتصل على رقم 1-800-562-3022 (TRS: 711).

[Burmese] ဘာသာပြန်ဆိုသူများနှင့် ထုတ်ပြန်ထားသည့် စာရွက်စာတမ်းများဘာသာပြန်ခြင်းအပါအဝင် ဘာသာစကားအထောက်အကူဝန်ဆောင်မှုများကို အခမဲ့ရနိုင်ပါသည်။ 1-800-562-3022 (TRS: 711) ကိုဖုန်းခေါ်ဆိုပါ။

[Cambodian] សេវាជំនួយភាសា រួមមានទាំងអ្នកបកប្រែផ្ទាល់មាត់ និង

ការបកប្រែឯកសារបោះពុម្ព គឺអាចរកបានដោយឥតគិតថ្លៃ។

ហៅទូរស័ព្ទទៅលេខ 1-800-562-3022 (TRS: 711)។

[Chinese] 免费提供语言协助服务，包括口译员和印制资料翻译。请致电 1-800-562-3022 (TRS: 711)。

[Korean] 통역 서비스와 인쇄 자료 번역을 포함한 언어 지원 서비스를 무료로 이용하실 수 있습니다. 1-800-562-3022 (TRS: 711)번으로 전화하십시오.

[Laotian] ການບໍລິການດ້ານພາສາ, ລວມທັງນາຍແປພາສາ ແລະ ການແປເອກະສານຕີພິມ, ມີໄວ້ໃຫ້ຟຣີໂດຍບໍ່ຄິດຄ່າ. ໂທຫາເລກ 1-800-562-3022 (TRS: 711).

[Oromo] Tajajilli gargaarsa afaanii, nama afaan hiikuu fi ragaalee maxxanfaman hiikuun, kaffaltii malee ni argattu. 1-800-562-3022 (TRS: 711) irratti bilbilaa.

[Persian] خدمات کمک زبانی، از جمله مترجم شفاهی و ترجمه اسناد و مدارک (مطالب) چاپی، بصورت رایگان ارائه خواهد شد.با شماره 1-800-562-3022 (TRS: 711) تماس بگیرید.

[Punjabi] ਭਾਸ਼ਾ ਸਹਾਇਤਾ ਸੇਵਾਵਾਂ—ਦੁਭਾਸ਼ੀਏ ਅਤੇ ਪ੍ਰਿੰਟ ਕੀਤੀ ਹੋਈ ਸਮੱਗਰੀ ਦੇ ਅੰਨੁਵਾਦ ਸਮੇਤ—ਮੁਫ਼ਤ ਉਪਲੱਬਧ ਹਨ।

1-800-562-3022 (TRS: 711) 'ਤੇ ਕਾਲ ਕਰੋ।

[Romanian] Serviciile de asistență lingvistică, inclusiv cele de interpretariat și de traducere a materialelor imprimate, sunt disponibile gratuit. Apelați 1-800-562-3022 (TRS: 711).

[Russian] Языковая поддержка, в том числе услуги переводчиков и перевод печатных материалов, доступна бесплатно. Позвоните по номеру 1-800-562-3022 (TRS: 711).

[Somali] Adeego caawimaad luuqada ah, ay ku jirto turjubaano afka ah iyo turjumid lagu sameeyo waraaqaha la daabaco, ayaa lagu helayaa lacag la'aan. Wac 1-800-562-3022 (TRS: 711).

[Spanish] Hay servicios de asistencia con idiomas, incluyendo intérpretes y traducción de materiales impresos, disponibles sin costo. Llame al 1-800-562-3022 (TRS: 711).

[Swahili] Huduma za msaada wa lugha, ikiwa ni pamoja na wakalimani na tafsiri ya nyaraka zilizochapishwa, zinapatikana bure bila ya malipo. Piga 1-800-562-3022 (TRS: 711).

[Tagalog] Mga serbisyong tulong sa wika, kabilang ang mga tagapagsalin at pagsasalin ng nakalimbag na mga kagamitan, ay magagamit ng walang bayad. Tumawag sa 1-800-562-3022 (TRS: 711).

[Tigrigna] ተርጎምትን ናይ ዝተፅሓፉ ማተርያላት ትርጉምን ሓዊሱ ናይ ቋንቋ ሓገዝ ግልጋሎት፣ ብዘይ ምንም ክፍሊት ይርከቡ።
ብ 1-800-562-3022 (TRS: 711) ደውል።

[Ukrainian] Мовна підтримка, у тому числі послуги перекладачів та переклад друкованих матеріалів, доступна безкоштовно. Зателефонуйте за номером 1-800-562-3022 (TRS: 711).

[Vietnamese] Các dịch vụ trợ giúp ngôn ngữ, bao gồm thông dịch viên và bản dịch tài liệu in, hiện có miễn phí. Gọi 1-800-562-3022 (TRS: 711).

สาระขาม

ยิ้มดีต้อนรับมาสู่ Washington Apple Health/ Apple Health services [4]

ขัด Services card ຂອງທ່ານ [4]

ການປິ່ນປົວປະຖົມພະຍາບານ [6]

ໂຄງການປິ່ນປົວສຸຂະພາບການປະພຶດໂດຍຄາວຕີ [7]

ການບໍຣິການໃນພາວະສຸກເສີນ [9]

ການຕິດຕໍ່ຫາການປິ່ນປົວສຸຂະພາບການປະພຶດ [10]

ຳຍຣະອຽດສຳລັບຄົນອະເມຣິກັນອິນດຽນແລະຄົນອາລາສກາດັ້ງເດີມ [11]

ການບໍຣິການທີ່ທ່ານອາດຈະຕ້ອງການເພື່ອຈະເຂົ້າຫາການປິ່ນປົວ ສຸຂະພາບ [12]

ສິດທິແລະຄວາມຮັບຜິດຊອບຂອງທ່ານ [13]

ການຕິດຕໍ່/ແຫລ່ງຊ່ວຍເຫລືອ [14]

ການປະຕິເສດຄວາມຮັບຜິດຊອບກ່ຽວກັບປື້ມຄູ່ມືຫົວນີ້

ປື້ມຄູ່ມືຫົວນີ້ຈະນຳແນະນຳສະເນີໃຫ້ທ່ານໃຫ້ຮູ້ຈັກສະວັດດີການຂອງທ່ານ ແລະ ອະທິບາຍສິດທິ ແລະ ຄວາມຮັບຜິດຊອບຂອງທ່ານແລະ ຈະເຂົ້າຫາການ ບໍຣິການໄດ້ແນວໃດ, ແລະ ຈະປ່ຽນໂຄງການປິ່ນສຸຂະພາບໄດ້ແນວໃດ. ກະຣຸນາຮັບຮູ້ໄວ້ວ່າປື້ມຄູ່ມືຫົວນີ້ບໍ່ໄດ້ກໍຕັ້ງສິດທິ ຫລື ສິດທິຕ້ອງໄດ້ຮັບທາງກົດ ຫມາຍແນວໃດແນວນຶ່ງ. ທ່ານບໍຄວນຈະອີງຕາມປື້ມຄູ່ມືຫົວນີ້ໃຫ້ເປັນແຫລ່ງ ຣາຍຣະອຽດແຫລ່ງດຽວເທົ່ານັ້ນກ່ຽວກັບ Apple Health(Medicaid). ທ່ານສາມາດໄດ້ຮັບຣາຍຣະອຽດຄົບ ຖ້ວນກ່ຽວກັບApple Health ໂດຍການ ເບິ່ງຢູ່ໃນແວບໄຊທ້ ຂອງHealth Care Authority ຢູ່ຫນ້າ *Laws and Rules*, **www.hca.wa.gov/about-hca/rulemaking**.

ຍິນດີຕ້ອນຮັບມາສູ່ Washington Apple Health

ທ່ານໄດ້ຮັບປື້ມຄູ່ມືຫົວນີ້ຍ້ອນວ່າທ່ານໄດ້ກາຍເປັນມີເງື່ອນໄຂໄດ້ຮັບ ໃນຫມໍໆມານີ້ນຳໂຄງການ Washington Apple Health (Medicaid) ທີ່ຖືກບໍຣິຫານໂດຍ Washington State Health Care Authority (HCA). ປື້ມຄູ່ມືຫົວນີ້ມີຣາຍ ຣະອຽດກ່ຽວກັບການບໍຣິການຂອງ Apple Health ແລະ ໂດຍປາສຈາກໂຄງການປິ່ນປົວທີ່ຖືກຄວບຄຸມນຳ.

ການບໍຣິການ **Apple Health**

ລູກຄ້າຂອງ Apple Health ໂດຍປາສຈາກໂຄງການປິ່ນປົວທີ່ ຖືກຄວບຄຸມນຳຈະມີເງື່ອນ ໄຂໄດ້ຮັບການບໍຣິການຕໍລົງໄປນີ້:

- ຫມາຍນັດພົບນຳທ່ານຫມໍ ຫລື ຜູ້ຊ່ຽວຊານການປິ່ນປົວສຸຂະພາບ ສຳລັບການປິ່ນປົວ ຈຳເປັນລວມທັງການບໍຣິການປິ່ນປົວປ້ອງກັນ ແລະ ການບໍຣິການສຸຂະພາບແຂງແຮງ
- ການປິ່ນປົວພະຍາບານໃນເຫດການສຸກເສີນ
- ການປິ່ນປົວແມ່ ແລະ ເດັກເກີດໃຫມ່
- ການປິ່ນປົວເດັກນ້ອຍ, ລວມທັງການປິ່ນປົວທາງປາກ ແລະ ສາຍຕາ
- ການບໍຣິການຂອງຫ້ອງວິຈັຍ
- ຢາສັ່ງຊື້ຈາກທ່ານຫມໍ
- ການນອນໂຮງພະຍາບານ
- ການບໍຣິການປິ່ນປົວຄົນເຈັບເຄື່ອນທີ່
- ການບໍຣິການປິ່ນປົວໃຫ້ດີຄືນຄືເກົ່າ ຫລື ໃຫ້ດີຄືນ* ແລະ ເຄື່ອງອຸບປະກອນ
- ການບໍຣິການດ້ານສຸຂະພາບໂຣກຈິດ
- ແວ່ນຕາ ແລະ ການສວມໃສ່ແວ່ນຕາສຳລັບເດັກນ້ອຍ (ຕຳກວ່າ 21 ປີ)
- ການບໍຣິການປິ່ນປົວຣະຍະຍາວ
- ການບໍຣິການປິ່ນປົວສຳລັບບຸກຄົນຜູ້ທີ່ມີຄວາມເສັຽອົງຄະດ້ານການຈະເຣີນເຕີບໂຕ
- ການປິ່ນປົວແຂ້ວ

** ມີໄວ້ຮັບໃຊ້ຜ່ານໂຄງການ Apple Health ສຳລັບຜູ້ໃຫຍ່ເທົ່ານັ້ນ. ໂທຫາ ພວກເຮົາໄດ້ທີ່ເລກ 1-800-562-3022 ເພື່ອຣາຍຣະອຽດເພີ້ມເຕີມ.*

ຫມາຍເຫດ: ລາຍຊື່ອັນນີ້ແມ່ນສຳລັບຣາຍຣະອຽດທົ່ວໄປເທົ່ານັ້ນ ແລະ ບໍໄດ້ຮັບປະກັນວ່າ Apple Health ຈະຄຸ້ມກັນການປິ່ນ ປົວ. ໂຄງການບາງຢ່າງຈະມີເງື່ອນໄຂໄດ້ຮັບການບໍຣິການເຫລົ່າ ນີ້ພ້ອມ ດ້ວຍຂອບເຂດ.ຈົ່ງເບິ່ງກົດຫມາຍ Washington Administrative Code (WAC) 182-501-0060.

ບັດບໍຣິການ **Services Card**

ທ່ານຈະໄດ້ຮັບບັດ Apple Health Services Card ໃບທາງໄປສະນີ,

ປະມານສອງອາທິດຫລັງຈາກທີ່ທ່ານກາຍເປັນມີເງື່ອນໄຂໄດ້ຮັບ Apple Health ໂດຍຜ່ານ Washington Healthplanfinder **www.wahealthplanfinder.org**, ຫລື Washington Connection **www.washingtonconnection.org**, ທ່ານ ຈະໄດ້ຮັບບັດບໍຣິການ Apple Health Services Card ສີຟ້າ (ຍັງຖືກເອີ້ນ ອີກວ່າແມ່ນບັດ ProviderOne) ຄືກັນກັບຢູ່ໃນຮູບຢູ່ທີ່ນີ້. ເກັບຮັກສາບັດໃບນີ້ໄວ້. ມັນຈະສະແດງໃຫ້ເຫັນວ່າທ່ານມີເງື່ອນໄຂໄດ້ຮັບການຄຸ້ມກັນ Apple Health. ທ່ານບໍຕ້ອງໄດ້ເຮັດໃຫ້ບັດບໍຣິການ Services Card ໃບໃຫມ່ຂອງທ່ານໃຊ້ການໄດ້. HCA ຈະເຮັດໃຫ້ບັດຂອງທ່ານໃຊ້ການໄດ້ກ່ອນທີ່ພວກເຮົາຈະສົ່ງອອກໄປໃຫ້ທ່ານ.

ຖ້າຫາກວ່າທ່ານບໍໄດ້ຮັບບັດ **Services Card** ຂອງທ່ານ ຫລື ທ່ານເຮັດເສັຽໄປ

ຖ້າຫາກວ່າທ່ານບໍໄດ້ຮັບບັດບໍຣິການ Services Card ຂອງທ່ານພາຍໃນສອງອາທິດ ຫລັງຈາກກາຍເປັນມີເງື່ອນໄຂໄດ້ຮັບ Apple Health, ກະຣຸນາຕິດຕໍຫາຜະແນກປະຊາ ສັມພັນຂອງ Apple Health ເພື່ອຈະຂໍເອົາບັດໃບໃຫມ່ແທນ.ທ່ານສາມາດເຂົ້າທາງ ອອນລາຍນ* 24/7 ໄດ້ທີ່ **https://fortress.wa.gov/hca/p1contactus** ຫລືໂທຫາໃນຣະຫວ່າງຊົ່ວໂມງເຮັດການ, 1-800-562-3022 (ເລກໂທຟຣີ).

ຖ້າຫາກວ່າທ່ານເຮັດບັດບໍຣິການ Services Card ຂອງທ່ານ ເສັຽ,ທ່ານສາມາດຮ້ອງຂໍ ເອົາບັດໃຫມ່ແທນ 24/7 ໂດຍການໃຊ້ທາງເລືອກທາງນຶ່ງຂອງທາງເລືອກເອົາເຫລົ່ານີ້:

- **ໂທຣະສັບບໍຣິການຕົນເອງ.** ໂທຫາເລກ 1-800-562-3022 (ໂທຟຣີ) ແລະ ເລືອກເອົາທາງເລືອກ 1 ສຳລັບ Client Services, ແລ້ວເລືອກເອົາທາງ ເລືອກ 1 ສຳລັບ Services Card.
- **ທາງຄອມພິວເຕີໂດຍການໃຊ້ທາງເຂົ້າຂອງລູກຄ້າ.** ທາງເຂົ້າຂອງລູກຄ້າຈະມີໄວ້ໃຫ້ຢູ່ທີ່ **https://www.waproviderone.org/client.**

ProviderOne

ທ່ານຈະເຫັນ“ProviderOne” ຢູ່ໃນບັດ Services Card ຂອງທ່ານ. ProviderOne ແມ່ນຣະບົບຂ່າວຣາຍຣະອຽດຂອງ HCA ທີ່ຊ່ວຍພວກເຮົາສົ່ງ ຣາຍຣະອຽດສຳຄັນໄປໃຫ້ທ່ານ. ເລກຢູ່ໃນບັດແມ່ນເລກລູກຄ້າ ProviderOne ຂອງທ່ານ.

ຜູ້ໃຫ້ການປິ່ນປົວສຸຂະພາບຍັງສາມາດໃຊ້ ProviderOne ເພື່ອຈະໃຫ້ແນ່ໃຈວ່າ ຄົນເຈັບຂອງເຂົາເຈົ້າໄດ້ຈົດຊື່ເຂົ້ານຳ Apple Health. ໃຫ້ແນ່ໃຈວ່າຈະລາຍ ງານການປ່ຽນແປງໃນຣາຍຣະອຽດກ່ຽວກັບຄອບຄົວຂອງທ່ານ,ເຊັ່ນວ່າການປ່ຽນແປງ ຂອງທີ່ຢູ່,ຢູ່ໃນ Washington Healthplanfinder ຫລື Washington Connection.

ສະມາຊິກແຕ່ລະຄົນຂອງຄອບຄົວຂອງທ່ານຜູ້ທີ່ມີເງື່ອນໄຂໄດ້ຮັບ Apple Health ຈະໄດ້ຮັບບັດ Services Card ຂອງເຂົາເຈົ້າເອງ. ແຕ່ລະຄົນມີເລກລູກຄ້າ ProviderOne ແຕກຕ່າງກັນຊຶ່ງຈະຢູ່ນຳເຂົາເຈົ້າໄປຕະລອດຊີວິດຂອງເຂົາເຈົ້າ.

ຖ້າຫາກວ່າທ່ານມີການຄຸ້ມກັນ Apple Health ມາແຕ່ກ່ອນຫລືເຄີຍມີ Medicaid ກ່ອນທີ່ມັນຈະກາຍເປັນທີ່ຮູ້ຈັກວ່າ Apple Health, ທ່ານຈະບໍ່ໄດ້ ຮັບບັດໃບໃໝ່. ບັດໃບເກົ່າຂອງທ່ານຍັງມີຄຸນຄ່າໃຊ້ໄດ້ຢູ່, ເຖິງແມ່ນວ່າມັນຈະມີຊ່ອງ ວ່າງຂາດຕອນໃນ ການຄຸ້ມກັນກໍຕາມ. ເລກລູກຄ້າ ProviderOne ຂອງທ່ານ ຍັງຢູ່ຄືເກົ່າເໝືອນເດີມ.

ຖືເອົາບັດ Services Card ຂອງທ່ານໄປນຳທ່ານເມື່ອເວລາ ທ່ານໄປຫາທ່ານໝໍ, ຮ້ານຂາຍຢາ,ຫລືບ່ອນປິ່ນປົວສຸຂະພາບອື່ນໆ.ທ່ານຍັງຈະຕ້ອງມີບັດ ID ມີຮູບຕິດອີກ.

ການປະຖົມພະຍາບານ

ເປັນຫຍັງຜູ້ໃຫ້ການປະຖົມພະຍາບານຈຶ່ງສຳຄັນ

ຜູ້ໃຫ້ການປະຖົມພະຍາບານ (PCP) ແມ່ນຜູ້ຊ່ຽວຊານການປິ່ນປົວສຸຂະພາບສຳຄັນທີ່ທ່ານຈະພົບ. PCP ໃຫ້ການບໍຣິການປະຖົມພະຍາບານແກ່ທ່ານແລະຄອບຄົວຂອງທ່ານແລະປະສານງານນຳຜູ້ໃຫ້ການບໍຣິການຄົນອື່ນໆ. PCP ຂອງທ່ານຈະກາຍເປັນຄຸ້ນເຄີຍນຳປະວັດສຸຂະພາບແລະບັນຫາສຸຂະພາບປັດຈຸບັນຂອງທ່ານແລະຊ່ວຍເຫລືອທ່ານຄວບຄຸມເບິ່ງນຳສຸຂະພາບຂອງທ່ານ.

PCP ຂອງທ່ານອາດຈະເປັນທ່ານໝໍ,ເຊັ່ນວ່າ:

- ຜູ້ຝຶກຫັດການພະຍາບານລົງທະບຽນກ້າວໜ້າ
- ທ່ານໝໍປະຈຳຄອບຄົວ
- ທ່ານໝໍປິ່ນປົວໂດຍບໍ່ໃຊ້ຢາ
- ທ່ານໝໍຜະດຸງລົມ/ທ່ານໝໍປິ່ນປົວຜູ້ຍິງ
- ທ່ານໝໍປິ່ນປົວເດັກນ້ອຍ
- ຜູ້ຊ່ວຍທ່ານໝໍ



ການເລືອກເອົາຜູ້ໃຫ້ການປິ່ນປົວປະຖົມພະຍາບານ

PCP ຂອງທ່ານຄວນຈະເປັນຄົນໃດຄົນນຶ່ງທີ່ທ່ານຮູ້ສຶກສະບາຍໃຈນຳ.ທ່ານສາມາດເລືອກເອົາ PCP ຜູ້ຊາຍຫລືຜູ້ຍິງກໍໄດ້,ຜູ້ທີ່ ຈະເວົ້າພາສາຂອງທ່ານໄດ້ອີກຄືກັນ,ຊຳນານສະເພາະໃນຄວາມ ເສັ້ຽງອົງຄະຂອງທ່ານ,ຫລືເຂົ້າໃຈປະເພນີວັດທະນະທັມຂອງທ່ານ.

ຖ້າຫາກວ່າທ່ານມີ PCP ຜູ້ທີ່ທ່ານມັກແລ້ວ,ຫລືໄດ້ຍິນກ່ຽວກັບຜູ້ໃຫ້ການປິ່ນປົວຜູ້ທີ່ທ່ານຢາກຈະລອງເບິ່ງ,ສອບຖາມນຳຜູ້ໃຫ້ການປິ່ນປົວວ່າເຂົາເຈົ້າຮັບເອົາການບໍຣິການ Apple Health fee-for-service ຫລືບໍ. ຖ້າຫາກວ່າເຂົາເຈົ້າຮັບເອົາ,ທ່ານສາມາດພົບກັບຜູ້ໃຫ້ການປິ່ນປົວຄົນນັ້ນຕໍ່ໄປໄດ້. ຖ້າຫາກວ່າເຂົາເຈົ້າບໍ່ຮັບເອົາ Apple Health fee-for-service, ທ່ານຈະຕ້ອງໄດ້ຊອກຫາ PCP ຄົນອື່ນ.ທ່ານສາມາດພົບກັບຜູ້ໃຫ້ການປິ່ນປົວຄົນອື່ນຄົນໃດກໍໄດ້ຜູ້ທີ່ຈະຮັບເອົາ Apple Health Services Card.

ການຂໍເອົາການສົ່ງຕໍ່ໄປເອົາການປິ່ນປົວພິເສດ

ບາງເທື່ອທ່ານຕ້ອງການທີ່ຈະພົບກັບຜູ້ຊ່ຽວຊານເຊັ່ນວ່າທ່ານໝໍຫົວໃຈສຳລັບຫົວໃຈຂອງທ່ານຫລືທ່ານໝໍປິ່ນປົວຕີນສຳລັບຕີນຂອງທ່ານ. PCP ຂອງທ່ານຈະເອົາໃບສົ່ງຕໍ່ໃຫ້ທ່ານສຳລັບການບໍຣິການພິເສດສະເພາະເຫລົ່ານີ້.

ໝາຍເຫດ: ການບໍຣິການພິເສດສະເພາະເຫລົ່ານີ້ຕ້ອງມີໃບອະນຸຍາດລ່ວງໜ້າຈາກ HCA ກ່ອນທີ່ທ່ານຈະໄດ້ຮັບການປິ່ນປົວ. ຜູ້ໃຫ້ການປິ່ນປົວຂອງທ່ານຈະຮ້ອງຂໍເອົາໃບອະນຸຍາດລ່ວງໜ້າກ່ອນເພື່ອວ່າທ່ານຈະສາມາດໄດ້ຮັບການບໍຣິການປິ່ນປົວ.

ຈະເຮັດໝາຍນັດພົບໄດ້ແນວໃດ

ເມື່ອໃດທີ່ທ່ານໄດ້ເລືອກເອົາ PCP ຂອງທ່ານແລ້ວ,ໂທຫາເພື່ອເຮັດໝາຍນັດພົບ.ສຳລັບການບໍຣິການສ່ວນຫລາຍ,ທ່ານຕ້ອງມີໝາຍນັດພົບເພື່ອຈະພົບກັບຜູ້ໃຫ້ການປິ່ນປົວ.ຖ້າຫາກວ່າທ່ານມີຄວາມອ້ອງໃຈແລະຄວາມຕ້ອງການດ້ານສຸຂະພາບຮີບດ່ວນ,ທ່ານຄວນຈະສາມາດພົບກັບ PCP ຂອງທ່ານໄດ້ພາຍໃນບໍ່ພໍເທົ່າໃດວັນ.ເຖິງແມ່ນວ່າທ່ານຈະບໍ່ມີຄວາມອ້ອງໃຈດ້ານສຸຂະພາບຮີບດ່ວນກໍຕາມ,ໃຫ້ເຮັດໝາຍນັດພົບສຳລັບການກວດສຸຂະພາບທົ່ວໄປ (ຍັງ ເປັນທີ່ເອີ້ນກັນອີກວ່າແມ່ນການກວດສຸຂະພາບແຂງແຮງ) .ໂດຍທົ່ວໄປແລ້ວມັນຈະໃຊ້ເວລາດົນນານກວ່າສຳລັບການກວດທົ່ວໄປເພາະສະນັ້ນແລ້ວຢ່າລໍຊ້ຢ້ອນໄປ.ການໄດ້ຮັບການກວດສຸຂະພາບແຂງແຮງແມ່ນສຳຄັນຍ້ອນວ່າການກວດພົບບັນຫາໃນຂັ້ນເລີ້ມແຮກສາມາດຮັກສາທ່ານຈາກການບໍ່ສະບາຍ.

ຖ້າຫາກວ່າທ່ານຕ້ອງການການປິ່ນປົວ

ມັນຈະເປັນການດີທີ່ສຸດທີ່ຈະພົບກັບ PCP ຂອງທ່ານສຳລັບການປິ່ນປົວປະຈຳຫລືການປິ່ນປົວປ້ອງກັນ.ຖ້າຫາກວ່າທ່ານມີຄວາມຕ້ອງການໃນການປິ່ນປົວສຸຂະພາບຮີບດ່ວນແລະບໍ່ສາມາດລໍຖ້າເອົາໝາຍນັດພົບນຳ PCP ຂອງທ່ານໄດ້,ໄປຫາສູນກາງປິ່ນປົວຮີບດ່ວນສຳລັບການປິ່ນປົວ,ແລະຕິດຕາມນຳ PCP ຂອງທ່ານ.

ສຳລັບການປິ່ນປົວໃນຍາມສຸກເສີນ – ໂທຫາ 911 ຫລືໄປຫາສະຖານທີ່ໃກ້ທີ່ສຸດບ່ອນທີ່ທ່ານໝໍປິ່ນປົວສຸກເສີນສາມາດຊ່ວຍເຫລືອໄດ້.ຕົວຢ່າງຂອງເຫດການສຸກເສີນແມ່ນ:ໂຣກຫົວໃຈວາຍ,ກະດູກຫັກ,ຫລືພິຕິການຮ້າຍແຮງ.

ສຸຂະພາບການປະພຶດ

ຖ້າຫາກວ່າທ່ານມີບັດ Services Card, ທ່ານຈະມີເງື່ອນໄຂໄດ້ຮັບການບໍຣິການປິ່ນປົວສຸຂະພາບໂຣກຈິດແລະການຕິດຢາເສບຕິດ (ລວມເຂົ້າກຳກັນເປັນທີ່ຮູ້ຈັກກັນວ່າ ແມ່ນ“ ການບໍຣິການສຸຂະພາບການປະພຶດ”) . ທ່ານສາມາດເຂົ້າຫາການບໍຣິການສຸຂະພາບການປະພຶດໄດ້ໃນທິນທາງຕໍ່ໄປນີ້:

- ຕິດຕໍ່ຫາໂຄງການປິ່ນປົວທີ່ຖືກຄວບຄຸມນຳຂອງ Behavioral Health Services Only (BHSO) ສຳລັບຄາວຕີຂອງທ່ານ.ເບິ່ງໜ້າ9.
- ໂທຫາສູນກາງປະຊາສັມພັນຂອງ Apple Health ໄດ້ທີ່ 1-800-562-3022,

ໃຫ້ແນ່ໃຈວ່າຈະບອກຜູ້ຊ່ຽວຊານສຸຂະພາບການປະພຶດຂອງທ່ານໃຫ້ຮູ້ຈັກນຳຖ້າຫາກວ່າ ທ່ານຍ້າຍເຮືອນ.

ຄຳເຕືອນໃຈ:ຖ້າຫາກວ່າທ່ານໄປຫາຜູ້ໃຫ້ການປິ່ນປົວຜູ້ທີ່ບໍ່ຢູ່ ພາຍໃຕ້ສັນຍາເພື່ອຈະຮັບໃຊ້ລູກຄ້າຂອງ Apple Health, ທ່ານຈະຕ້ອງໄດ້ຈ່າຍເງິນ.

ທ່ານຈະພົບເຫັນຣາຍຣະອຽດເພີ້ມເຕີມຢູ່ໃນປຶ້ມຄູ່ມືສະວັດດີການສຸຂະພາບການປະພຶດ,ຈະມີໄວ້ໃຫ້ຈາກ HCA ຢູ່ທີ່: **www.hca.wa.gov/mental-health-benefits.**

ເພື່ອຣາຍຣະອຽດເພີ້ມເຕີມກ່ຽວກັບການປິ່ນປົວ ແລະ ການບໍຣິກາ ນປິ່ນປົວສຸຂະພາບການປະພຶດທີ່ໃຫ້ເງິນຫຶນໂດຍ HCA, ຈົ່ງແວ່ເຂົ້າຢ້ຽມ **www.hca.wa.gov/mental-health-and-addiction-services.**

ແຫລ່ງຊ່ວຍເຫລືອອື່ນໆ:

- ເພື່ອຣາຍຣະອຽດເພີ້ມເຕີມກ່ຽວກັບການປິ່ນປົວສຸຂະພາບການປະພຶດ: **www.hca.wa.gov/mental-health-and-addiction-services**.
- ເພື່ອເຄັດລັບໃນການປ້ອງກັນການໃຊ້ເຫລົ້າແລະກັນຊາຂອງຄົນອາຍຸ ຕ ຳ ກ ວ ່ າ ກ ະ ສ ຽ ນ : **www.StartTalkingNow.org**.
- ການຊ່ວຍເຫລືອສຳລັບວັຍຮຸ່ນອາຍຸສິບກວ່າ (ຊາວໜຸ່ມອາຍຸສິບກວ່າຕອບສາຍໂທ) : **866teenlink.org** ຫລື 1-866-833-6546.

ການບໍຣິການປິ່ນປົວການໃຊ້ເຫລົ້າແລະຢາເສບຕິດ ອາດຈະລວມເອົາ:

ການປະເມີນຜົນ – "ການສຳພາດ" ໂດຍຜູ້ໃຫ້ການປິ່ນປົວສຸຂະພາບເພື່ອຈະຕັດສິນ ການບໍຣິການປິ່ນປົວທີ່ທ່ານຕ້ອງການ.

ການເຂົ້າແຊກແຊງສັ້ນໆ– ເວລາຈຳກັດ, ເພື່ອຈະລຸດຜ່ອນບັນຫານຳການໃຊ້.

ການຄວບຄຸມນຳການຖອນ (ການຖອນພິດ) – ການຊ່ວຍເຫລືອນຳການລຸດຜ່ອນ ການໃຊ້ເຫລົ້າ ຫລື ຢາເສບຕິດແນວອື່ນໃນຣະຍະຍາວ,ຈົນກວ່ານັນຈະປອດພັຍທີ່ຈະຢຸດການໃຊ້.ການບໍຣິການປິ່ນປົວບໍ່ໄດ້ລວມເອົາການປິ່ນປົວຢູ່ຕາມໂຮງພະຍາບານ.

ການປິ່ນປົວບໍ່ນອນສະຖານທີ່ປິ່ນປົວ – ການປຶກສາສ່ວນບຸກຄົນ ແລະ ເປັນກຸ່ມຢູ່ໃນ ຊຸມນຸມຊົນຂອງທ່ານ.

ການປິ່ນປົວບໍ່ນອນສະຖານທີ່ປິ່ນປົວເຂັ້ມງວດ – ການປຶກສາສ່ວນບຸກຄົນ ແລະ ເປັນ ກຸ່ມຫລາຍໆເທື່ອກວ່າ.

ການປິ່ນປົວນອນຢູ່ສະຖານທີ່ປິ່ນປົວ – ໂຄງການຄົບຖ້ວນຂອງການປຶກສາສ່ວນບຸກ ຄົນ, ການປຶກສາເປັນກຸ່ມ, ແລະ ການສຶກສາທີ່ຖືກເອົາໃຫ້ໃນສະຖານທີ່ຊຶ່ງຖືກຄວບຄຸມ ເບິ່ງນຳຕະລອດ 24 ຊົ່ວໂມງຕໍ່ມື້.

ການປິ່ນປົວໃຊ້ແທນຢາຝິ່ນ – ເອົາການປະເມີນຜົນບໍ່ນອນສະຖານທີ່ປິ່ນປົວໃຫ້ ແລະ ການປິ່ນປົວສຳລັບການຕິດຢາຝິ່ນ. ລວມທັງຢາທີ່ຖືກອະນຸມັດໃຫ້ ແລະ ການປຶກສາ.

ການຄວບຄຸມເບິ່ງນຳກໍຣະນີ – ການຊ່ວຍເຫລືອນຳການຊອກເອົາການບໍຣິການທາງ ດ້ານການພະຍາບານ, ສັງຄົມ, ການສຶກສາ, ແລະ ການບໍຣິການອື່ນໆ.

ການບໍຣິການປິ່ນປົວສຸຂະພາບໂຣກຈິດຈະລວມເອົາ:

ການຕີຣາຄາປະເມີນຜົນໃນການສຳພາດ – ຊີ້ບອກຄວາມຕ້ອງການ ແລະ ເປົ້າຫມາຍ ຂອງທ່ານ ແລະ ຊ່ວຍຜູ້ໃຫ້ການປິ່ນປົວສຸຂະພາບໂຣກຈິດຂອງທ່ານໃຫ້ແນະນຳການ ບໍຣິການ ແລະ ແຜນການປິ່ນປົວແນວອື່ນ.

ການປິ່ນປົວສ່ວນບຸກຄົນ – ການປຶກສາ ແລະ/ຫລື ກິຈກັມອື່ນໆ ທີ່ຖືກ ອອກແບບມາເພື່ອ ຈະບັນລຸເປົ້າຫມາຍຂອງທ່ານຢູ່ໃນແຜນການປິ່ນປົວຂອງທ່ານ.

ການຄວບຄຸມເບິ່ງນຳຢາ – ພະນັກງານທີ່ມີໃບປະກາດສັ່ງຊື້ຢາ ແລະ ເວົ້ານຳທ່ານກ່ຽວ ກັບຜົນສະທ້ອນຂອງຢາ.

ການສອດແນມເບິ່ງນຳຢາ – ການບໍຣິການເພື່ອຈະເບິ່ງວ່າຢາຂອງທ່ານທຳງານແນວ ໃດ ແລະ ເພື່ອຈະຊ່ວຍທ່ານໃຫ້ໃຊ້ຢາຢ່າງຖືກຕ້ອງ.

ການບໍຣິການປິ່ນປົວເປັນກຸ່ມ – ການປຶກສານຳຄົນອື່ນຜູ້ທີ່ມີບັນຫາຄ້າຍຄືກັນ.

ການອູ້ມຊູຈາກຫມູ່ເພື່ອນ – ການຊ່ວຍເຫລືອນຳການຜ່ານຜ່າ ຣະບົບການປິ່ນປົວໂຣກຈິດ ແລະ ການບັນລຸເປົ້າຫມາຍຂອງການ ພັກຟື້ນຂອງທ່ານ, ທີ່ຖືກເອົາໃຫ້ໂດຍ ບຸກຄົນຜູ້ທີ່ຖືກຝຶກຝົນມາ ຜູ້ທີ່ມີພັກຟື້ນຈາກການເຈັບປ່ວຍໂຣກຈິດ.

ການເຂົ້າແຊກແຊງນຳສັ້ນໆ ແລະ ການປິ່ນປົວ – ການປຶກສາສັ້ນໆທີ່ມຸ່ງຫມາຍໃສ່ບັນ ຫາເຈາະຈົງ

ການປິ່ນປົວຄອບຄົວ – ການປຶກສາມຸ່ງສູນໃສ່ຄອບຄົວເພື່ອຈະຊ່ວຍກໍສ້າງຄວາມສັມພັນ ໃຫ້ຫມັ້ນຄົງກວ່າເກົ່າ ແລະ ແກ້ໄຂບັນຫາ.

ການປິ່ນປົວເຂັ້ມງວດ –ການບໍຣິການປິ່ນປົວທີ່ຖືກເອົາໃຫ້ໂດຍຄະນະທີມງານທ່ານ ຫມໍສຸຂະພາບໂຣກຈິດເພື່ອຈະຊ່ວຍເຫລືອທ່ານໃຫ້ບັນລຸເປົ້າຫມາຍຂອງທ່ານຢູ່ໃນ ແຜນການປິ່ນປົວຂອງທ່ານ.

ການສຶກສາບຳບັດຈິດໃຈ – ການສຶກສາກ່ຽວກັບພະຍາດໂຣກຈິດ,ທາງເລືອກເອົາ ການປິ່ນປົວສຸຂະພາບໂຣກຈິດ, ຢາ ແລະ ການພັກຟື້ນ,ລວມທັງການອູ້ມຊູ ແລະ/ຫລື ການບໍຣິການອູ້ມຊູຊ່ວຍເຫລືອ.

ການອູ້ມຊູກາງເວັນ – ໂຄງການຊ່ວຍເຂັ້ມງວດເພື່ອຈະຮຽນຮູ້ຫລື ຊ່ວຍເຫລືອນຳ ຄວາມຊຳນານນຳການດຳຣົງຊີວິດອິດສະຣະ.

ການຕີຣາຄາປະເມີນຜົນ ແລະ ການປິ່ນປົວ/ການນອນໂຮງພະຍາບານຊຸມນຸມຊົນ – ການປິ່ນປົວຍາມພາວະສຸກເສີນທີ່ຈຳເປັນທາງດ້ານການແພດ. ທ່ານ ບໍ່ຕ້ອງ ໄດ້ ເຮັດການສຳພາດຕີຣາຄາບໍ່ນອນໂຮງຫມໍເບິ່ງກ່ອນການບໍຣິການອັນນີ້.

ການບໍຣິການປິ່ນປົວໃຫ້ທຸ່ນທ່ຽງ - ຖືກເອົາໃຫ້ຢູ່ໃນເຮືອນຂອງທ່ານ ຫລື ໃນລັກສະ ນະແວດລ້ອມຄືກັບເຮືອນເພື່ອຈະຫລີກເວັ້ນການຢູ່ໃນໂຮງພະຍາບານ. ທ່ານ ບໍ່ຕ້ອງ ໄດ້ເຮັດການສຳພາດຕີຣາຄາເບິ່ງກ່ອນການບໍຣິການອັນນີ້.

ການຄວບຄຸມເບິ່ງນຳໃຫ້ເຂົ້າສູ່ສະພາບເດີມ – ການປະສານງານຣະຫວ່າງການບໍ ຣິການປິ່ນປົວສຸຂະພາບໂຣກຈິດນອນໂຮງຫມໍ ແລະ ບໍ່ນອນໂຮງຫມໍ. ອັນນີ້ອາດຈະ ເປັນພາກສ່ວນນຶ່ງຂອງການຕີຣາຄາເວລາຈິດຊີ່ຂອງທ່ານ.

ການບໍຣິການປິ່ນປົວສຸຂະພາບໂຣກຈິດທີ່ຖືກເອົາໃຫ້ຢູ່ສະຖານທີ່ຄ້າຍຄືເຮືອນ - ການບໍຣິການຖືກເອົາໃຫ້ຢູ່ບ່ອນທີ່ທ່ານອາສັຍຢູ່ຖ້າຫາກວ່າທ່ານອາສັຍຢູ່ໃນສະຖານ ທີ່ແບບເປັນກຸ່ມ.

ການຕີຣາຄາປະຊາຊົນພິເສດ – ຄວາມຊ່ວຍເຫລືອນຳການວາງແຜນປິ່ນປົວຈາກຜູ້ ຊ່ຽວຊານຜູ້ທີ່ເຮັດວຽກນຳພົລເມືອງພິເສດ, ເຊັ່ນວ່າເດັກນ້ອຍ, ຜູ້ໃຫຍ່ຄົນແກ່ກວ່າ ແລະ ບຸກຄົນມາຈາກເບື້ອງຫລັງຫລາຍປະເພນີອື່ນໆ.

ການປະເມີນຜົນເບິ່ງໂຣກຈິດ – ການກວດເບິ່ງທີ່ຊ່ວຍໄດ້ນຳການວິຈັຍພະຍາດ, ການ ຕີຣາຄາ ແລະ ການວາງແຜນການປິ່ນປົວ.

ການບໍຣິການໃນພາວະສຸກເສີນ

ການບໍຣິການໃນພາວະສຸກເສີນແມ່ນການບໍຣິການ 24 ຊົ່ວໂມງ ທີ່ມຸ່ງໝາຍໃສ່ທີ່ຈະຮັດໃຫ້ທ່ານໝັ້ນຄົງຖ້າຫາກວ່າທ່ານຕົກ ຢູ່ໃນພາວະສຸກເສີນ, ໂດຍທີ່ວ່າຢູ່ໃນສະຖານທີ່ຊຶ່ງເໝາະສົມທີ່ສຸດທີ່ຈະຕອບສະນອງຄວາມຕ້ອງການຂອງທ່ານ. ທ່ານ ບໍ່ຕ້ອງ ໄດ້ຮັດການສຳພາດຕີຣາຄາເບິ່ງກ່ອນການບໍຣິການອັນນີ້.

- ເພື່ອຄວາມຊ່ວຍເຫລືອທັນທີ, ໂທຫາ 911 ຫລື ໄປຫາຫ້ອງສຸກເສີນຢູ່ໂຮງພະຍາບານໃກ້ບ້ານທ່ານທີ່ສຸດ. ທ່ານ ບໍ່ຕ້ອງ ມີການອະນຸມັດສຳລັບການບໍຣິການໃນພາວະສຸກເສີນ.
- ສຳລັບລາຍຊື່ຂອງສາຍດ່ວນພາວະສຸກເສີນຂອງຣັດ,ແວ່ເຂົ້າເບິ່ງ: **www.hca.wa.gov/mental-health-crisis-lines**.
- ສຳລັບສາຍ Recovery Help Line: **www.waRecoveryHelpLine.org** . ຖ້າຫາກວ່າທ່ານຕ້ອງການການປິ່ນປົວ,ໂທຫາເລກ 24- ຊົ່ວໂມງ,ສາຍຟຣີແລະເປັນຄວາມລັບ 1-866-789-1511 (TTY 1-206-461-3219).
- ສຳລັບສາຍດ່ວນ National Suicide Prevention Lifeline: ໂທຫາເລກ 1-800-273-8255 (ຜູ້ໃຊ້ TTY 1-800-799-4889).

ການຕິດຕໍ່ຫາຂອງການປິ່ນປົວສຸຂະພາບການປະພຶດເທົ່ານັ້ນ

ໂຄງການປິ່ນປົວທີ່ຖືກຄວບຄຸມນຳ	ໂທຣະສັບສູນກາງ	ແວບໄຊທ໌
Amerigroup (AMG)	1-800-600-4441	**www.myamerigroup.com/wa**
Community Health Plan of Washington (CHPW)	1-800-440-1561	**www.chpw.org**
Coordinated Care of Washington (CCW)	1-877-644-4613	**www.coordinatedcarehealth.com**
Molina Healthcare of Washington (MHW)	1-800-869-7165	**www.molinahealthcare.com**
United Healthcare Community Plan (UHC)	1-877-542-8997	**www.uhccommunityplan.com**

ອົງການປິ່ນປົວສຸຂະພາບທີ່ຖືກຄວບຄຸມນຳ (ສຳລັບສະວັດດີການການປິ່ນປົວສຸຂະພາບການປະພຶດເທົ່ານັ້ນ)

County	Amerigroup	Community Health Plan	Coordinated Care	Molina Healthcare	United Healthcare	Integrated managed care
Adams	X	X		X		1/1/19
Asotin	X	X	X	X		1/1/19
Benton	X	X	X	X		1/1/19
Chelan	X		X	X		1/1/18
Clallam	X			X	X	1/1/20
Clark	X	X		X		4/1/16
Columbia	X	X	X	X		1/1/19
Cowlitz	X			X	X	1/1/20
Douglas	X		X	X		1/1/18
Ferry	X	X		X		1/1/19
Franklin	X	X	X	X		1/1/19
Garfield	X	X	X	X		1/1/19
Grant	X		X	X		1/1/18
Grays Harbor	X			X	X	1/1/20
Island	X	X	X	X	X	7/1/19
Jefferson	X			X	X	1/1/20
King	X	X	X	X	X	1/1/19
Kitsap	X			X	X	1/1/20
Kittitas	X	X	X	X		1/1/19
Klickitat	X	X		X		1/1/19
Lewis	X			X	X	1/1/20
Lincoln	X	X		X		1/1/19
Mason	X			X	X	1/1/20
Okanogan	X		X	X		1/1/19
Pacific	X			X	X	1/1/20
Pend Oreille	X			X		1/1/19
Pierce	X		X	X	X	1/1/19
San Juan	X	X	X	X	X	7/1/19
Skagit	X	X	X	X	X	7/1/19
Skamania	X	X		X		4/1/16
Snohomish	X	X	X	X	X	7/1/19
Spokane	X	X		X		1/1/19
Stevens	X	X		X		1/1/19
Thurston	X			X	X	1/1/20
Wahkiakum	X			X	X	1/1/20
Walla Walla	X	X	X	X		1/1/19
Whatcom	X	X	X	X	X	7/1/19
Whitman	X	X	X	X		1/1/19
Yakima	X	X	X	X		1/1/19
Foster Care (statewide)			X			1/1/19



Note: Apple Health Foster Care ແມ່ນໂຄງການທົ່ວລັດ,ໄດ້ຖືກເອົາໃຫ້ຜ່ານໂຄງການ Apple Health Core Connections (Coordinated Care of Washington).

ຣາຍຣະອຽດສຳລັບຄົນອະເມຣິກັນອິນດຽນແລະຄົນອາລາສກາດັ້ງເດີມ

ຖ້າຫາກວ່າທ່ານເປັນຄົນອະເມຣິກັນອິນດຽນຫລືຄົນອາລາສກາດັ້ງເດີມ,ທ່ານອາດຈະສາມາດໄດ້ຮັບການບໍຣິການປິ່ນປົວສຸຂະພາບຜ່ານໂຄງການ **Indian Health Service facility, tribal health care program** ຫລື **Urban Indian Health Program (UIHP)** ເຊັ່ນວ່າ Seattle Indian Health Board ຫລື NATIVE Project of Spokane. ຜູ້ໃຫ້ການບໍຣິການຢູ່ຕາມຄລີນິກເຫລົ່ານີ້ຮູ້ຈັກປະເພນີວັດທະນະທັມຂອງທ່ານ,ຊຸມນຸມຊົນ,ແລະຄວາມຕ້ອງການດ້ານການປິ່ນປົວສຸຂະພາບຂອງທ່ານ.

ເອົາເຈົ້າຈະເອົາໃຫ້ທ່ານການປິ່ນປົວທີ່ທ່ານຕ້ອງການຫລືສິ່ງທ່ານໄປຫາຜູ້ຊ່ຽວຊານ.ເອົາເຈົ້າຍັງຈະຊ່ວຍເຫລືອທ່ານນຳການຕັດສິນໃຈທີ່ທ່ານຕ້ອງການທີ່ຈະເຮັດກ່ຽວກັບວ່າຈະເລືອກເອົາໂຄງການປິ່ນປົວທີ່ຖືກຄວບຄຸມນຳຫລືບໍ (ຊຶ່ງອາດຈະເປັນໂຄງການ Behavioral Health Services Only [BHSO] plan), ຫລືການລຸ້ມກັນ Apple Health ໂດຍປາສຈາໂຄງການປິ່ນປົວທີ່ຖືກຄວບຄຸມນຳ (ອັນນີ້ຖືກເອີ້ນວ່າ Apple Health fee-for-service) . ຖ້າຫາກວ່າທ່ານມີຄຳຖາມກ່ຽວກັບການປິ່ນປົວສຸຂະພາບຂອງທ່ານຫລື ການລຸ້ມກັນການປິ່ນປົວສຸຂະພາບຂອງທ່ານ,ພະນັກງານຂອງອົມເຜົ່າຂອງທ່ານຫລື UIHP ອາດຈະສາມາດຊ່ວຍເຫລືອທ່ານໄດ້.

ທົນທາງທີ່ຈະຮັບເອົາການປິ່ນປົວສຸຂະພາບ

HCA ເອົາທາງເລືອກໃຫ້ຄົນອະເມຣິກັນອິນດຽນແລະຄົນອາລາສກາດັ້ງເດີມຢູ່ໃນຮັດວໍຊິງຕັນຣະຫວ່າງການປິ່ນປົວທີ່ຖືກຄວບຄຸມນຳຂອງ Apple Health ຫລືການລຸ້ມກັນ Apple Health ໂດຍປາສຈາໂຄງການປິ່ນປົວທີ່ຖືກຄວບຄຸມນຳ. HCA ເຮັດແນວນີ້ເພື່ອຈະສອດຄ່ອງນຳກົດຣະບຽບຂອງຣັດຖະບານກາງ, ໃນການຮັບຮູ້ຄວາມຫຍຸ້ງຍາກສັບສົນຂອງຣະບົບການໃຫ້ການປິ່ນປົວສຸຂະພາບຂອງຄົນອິນດຽນ,ແລະເພື່ອຈະຊ່ວຍຮັບປະກັນວ່າທ່ານມີການເຂົ້າເຖິງການປິ່ນປົວສຸຂະພາບທີ່ເຫມາະສົມຕໍ່ປະເພນີວັດທະນະທັມ.

- ຢູ່ໃນການລຸ້ມກັນຂອງApple Healthໂດຍປາສຈາກໂຄງການປິ່ນປົວທີ່ຖືກຄວບຄຸມນຳ,ທ່ານຈະເລືອກເອົາຜູ້ໃຫ້ການປິ່ນປົວຄົນໃດກໍໄດ້ຜູ້ທີ່ເຂົ້າຮ່ວມນຳໂຄງການ Apple Healthຈ່າຍຕາມຄ່າທຳນຽມແລະຮັບເອົາຄົນເຈັບໃນປັດຈຸບັນ.ຜູ້ໃຫ້ການປິ່ນປົວເຫລົ່ານີ້ຕ້ອງສອດຄ່ອງນຳກົດກຳນົດທຸກໆຢ່າງຂອງໃບອະນຸຍາດທີ່ຣັດຣັດອກໃຫ້ຂອງເອົາເຈົ້າ.ເພື່ອຈະຊອກຫາຜູ້ໃຫ້ການປິ່ນປົວຂອງApple Health ແວ່ເຂົ້າຢ້ຽມ **https://fortress.wa.gov/hca/P1findaprovider.**

> *ທາງເລືອກເອົາອັນນີ້ສາມາດເຂົ້າໃຈໄດ້ຖ້າຫາກວ່າການປິ່ນປົວຂອງທ່ານໄດ້ຖືກຄວບຄຸມເບິ່ງນຳແລ້ວ,ເຊັ່ນວ່າໂດຍໂຄງການປິ່ນປົວສຸຂະພາບຂອງອົມເຜົ່າຫລື UIHP.*

- ດ້ວຍການປິ່ນປົວທີ່ຖືກຄວບຄຸມນຳຂອງ Apple Health, ການປິ່ນປົວສຸຂະພາບຂອງທ່ານໄດ້ຖືກຄວບຄຸມນຳໂດຍ ອົງການປິ່ນປົວທີ່ຖືກຄວບຄຸມນຳ (MCO). ອັນນີ້ຫມາຍຄວາມວ່າ MCO ໃຊ້ເປັນຈຸດຕິດຕໍ່ບ່ອນດຽວຂອງທ່ານເພື່ອຈະໄດ້ຮັບການບໍຣິການ ແລະຊ່ວຍປະສານງານການປິ່ນປົວຂອງທ່ານ.

> *ທາງເລືອກອັນນີ້ສາມາດເຂົ້າໃຈໄດ້ຖ້າຫາກວ່າທ່ານບໍ່ມີຄົນໃດຄົນນຶ່ງຄວບຄຸມເບິ່ງນຳການປິ່ນປົວຂອງທ່ານ.*



ທ່ານສາມາດປ່ຽນການເລືອກເອົາຂອງທ່ານໄດ້ໃນທຸກໆເວລາ,ແຕ່ວ່າການປ່ຽນແປງຈະບໍ່ມີຜົນບັງຄັບໃຊ້ໄດ້ຈົນກວ່າເດືອນທີ່ມີຢູ່ຕໍ່ມາ.ຖ້າຫາກວ່າທ່ານໄດ້ຖືກຕິດແໜດນຳຫລືຮັດວຽກຮ່ວມກັນນຳ Tribal Assister ຜ່ານສະຖານທີ່ HIS, ໂຄງການ Tribal health ຫລື UIHP, ເອົາເຈົ້າສາມາດຊ່ວຍເຫລືອທ່ານທຳການຕັດສິນໃຈໄດ້.ທ່ານຍັງສາມາດຕິດຕໍ່ຫາ Health Care Authority ໄດ້ທີ່ເລກ1-800-562-3022 ເພື່ອຈະບອກໃຫ້ພວກເຮົາຮູ້ຈັກທາງເລືອກຂອງທ່ານ,ລວມທັງການປ່ຽນແປງຕ່າງໆທີ່ທ່ານປະສົງຢາກເຮັດ,ແລະເພື່ອຈະຖາມຄຳຖາມ.

ການບໍຣິການທີ່ທ່ານຈະຕ້ອງການເພື່ອຈະເຂົ້າເຖິງການປິ່ນປົວ ສຸຂະພາບ

ທ່ານອາດຈະຕ້ອງການນາຍແປພາສາ

ຖ້າຫາກວ່າທ່ານເວົ້າພາສາອັງກິດບໍ່ໄດ້ດີຫລືວ່າທ່ານເປັນຄົນຫູໜວກ,ໜູໜວກບອດ,ຫລືຍາກທີ່ຈະຟັງສຽງ. ນາຍແປພາສາຜູ້ຊ່ຽວຊານຈະມີໄວ້ໃຫ້ໃນຫລາຍໆພາສາ, ລວມທັງພາສາໃບ້, ໂດຍບໍ່ຄິດ ຄ່ານຳທ່ານ. ເມື່ອເວລາທ່ານຣັດໜາຍນັດພົບການປິ່ນປົວສຸຂະພາບ, ບອກໃຫ້ຜູ້ຕ້ອນຮັບແຂກຮູ້ຈັກຖ້າຫາກວ່າທ່ານຕ້ອງການນາຍແປພາສາ. ນາຍແປພາສາປາກເວົ້າສາມາດໄປຫ້ອງການຂອງຜູ້ໃຫ້ ການປິ່ນປົວ ຫລື ຢູ່ທາງໂທຣະສັບໃນຣະຫວ່າງໜາຍນັດພົບຂອງທ່ານ.ນາຍແປພາສາໃບ້ສາມາດໄປຫ້ອງການຂອງຜູ້ໃຫ້ການປິ່ນປົວຖ້າຫາກວ່າທ່ານເປັນຄົນຫູໜວກ,ໜູ ໜວກບອດ,ຫລືຍາກທີ່ຈະຟັງສຽງ.

ມັນຈະເປັນການດີກວ່າທີ່ຈະໃຊ້ນາຍແປພາສາທີ່ຊ່ຽວຊານຄົນນຶ່ງແທນທີ່ວ່າຈະພາເອົາສະມາຊິກຄອບຄົວ ຫລື ໝູ່ເພື່ອນມາມຳເພື່ອຈະແປພາສາໃຫ້ທ່ານ. ນາຍແປພາສາໄດ້ຖືກຝຶກຝົນມາເພື່ອຈະເຂົ້າໃຈຄຳສັບຂອງການປິ່ນປົວສຸຂະພາບ. ເຂົາເຈົ້າຈະຊ່ວຍເຫລືອທ່ານ ແລະ ຜູ້ໃຫ້ການປິ່ນປົວຂອງທ່ານເຂົ້າໃຈກັນ ແລະ ກັນ. ຮຽນຮູ້ເພີ້ມເຕີມຢູ່ທີ່ **www.hca.wa.gov/interpreter-services.**

ຖ້າຫາກວ່າທ່ານມີຄວາມເສັຽອົງຄະ

ຖ້າຫາກວ່າທ່ານມີຄວາມເສັຽອົງຄະນຳການປາກເວົ້າ ຫລື ການຟັງສຽງ ຫລື ບັນຫາເຣື່ອງການເຄື່ອນທີ່ໄປມາ, ທ່ານຄວນຈະບອກຜູ້ຕ້ອນຮັບແຂກເມື່ອເວລາທ່ານຣັດໜາຍນັດພົບຂອງທ່ານ. ຜູ້ຕ້ອນຮັບແຂກຈະຊ່ວຍທ່ານທຳການຈັດຫາທີ່ຈຳເປັນທຸກໆຢ່າງ.ຖ້າຫາກວ່າທ່ານ ເປັນຄົນຫູໜວກ,ໜູໜວກບອດ,ຫລືຍາກທີ່ຈະຟັງສຽງ,ແລະຕ້ອງການນາຍແປພາສາໃບ້,ກະຣຸນາບອກໃຫ້ຜູ້ຕ້ອນຮັບແຂກຮູ້ຈັກນຳ.ນາຍແປພາສາທີ່ຊ່ຽວຊານຈະມີໄວ້ໃຫ້, ໂດຍບໍ່ຄິດຄ່ານຳທ່ານ.

ທ່ານສາມາດໄດ້ຮັບຄວາມຊ່ວຍເຫລືອນຳການຂົນສົ່ງໄປມາ

ທ່ານຈະມີເງື່ອນໄຂໄດ້ຮັບຄວາມຊ່ວຍເຫລືອນຳການຂົນສົ່ງເດີນທາງໄປຫາໜາຍນັດພົບການປິ່ນປົວສຸຂະພາບຂອງທ່ານໂດຍບໍ່ໄດ້ຄິດຄ່າແນວໃດຈາກທ່ານ. ໜາຍນັດພົບຕ້ອງແມ່ນສຳລັບການບໍຣິການປິ່ນປົວທີ່ຖືກຄຸ້ມກັນໂດຍ Apple Health. ຊະນິດຂອງການຂົນ ສົ່ງເດີນທາງທີ່ວ່ໄປທີ່ສຸດທີ່ມີໄວ້ໃຫ້ລວມເອົາ: ຣົດເມປະຈຳທາງ, ບັດແລກປ່ຽນເອົານ້ຳມັນ, ການຈ່າຍເງິນຄືນສຳລັບຣະຍະທາງຂອງ ຜູ້ຮັບ ແລະ ຜູ້ອາສາສະມັກ, ຄົນຂັບ ຣົດອາສະສະມັກ, ຣົດແທກຊີ, ຣົດແວນໃສ່ຕັ່ງນັ່ງຍຸກເອົາ ຫລື ຍານພາຫະນະທີ່ເຂົ້າໄດ້, ແລະ ຣົດເມການຄ້າ ແລະ ທາງອາກາດ. ລາຍຊື່ຂອງນາຍໜ້າສາມາດ ຖືກພົບເຫັນໄດ້ຢູ່ທີ່ **www.hca.wa.gov/transportation-help.**

ສິດທິແລະຄວາມຮັບຜິດຊອບຂອງທ່ານ

ຕາມກົດຫມາຍແລ້ວ, ທ່ານມີສິດທິກ່ຽວກັບການບໍຣິການປິ່ນປົວສຸຂະພາບທີ່ທ່ານໄດ້ຮັບ, ແລະ ທ່ານຍັງມີຄວາມຮັບຜິດຊອບບາງຢ່າງອີກຄືກັນເພື່ອຈະຊ່ວຍຮັກສາ ແລະ ປັບປຸງສິ່ງເສີມສຸຂະພາບຂອງທ່ານໃຫ້ດີຂຶ້ນ ແລະ ຫລີກເວັ້ນຄ່າໃຊ້ຈ່າຍທີ່ບໍ່ຈຳເປັນ. ຖ້າຫາກວ່າທ່ານບໍ່ຮັກສາຫມາຍນັດພົບຫມໍຂອງທ່ານ,ແລະ ບໍ່ຮ່ວມມືນຳທ່າຫມໍປິ່ນປົວປະຖົມພະຍາບານຂອງທ່ານ, ຜູ້ໃຫ້ການປິ່ນປົວຂອງທ່ານຈະປະຕິເສດທີ່ຈະເບິ່ງທ່ານ.ກະຣຸນາຕິດຕໍ່ມາຫາພວກເຮົາຖ້າຫາກວ່າທ່ານຢາກໄດ້ຮາຍຣະອຽດເພີ້ມເຕີມ.

ທ່ານມີສິດທິທີ່ຈະ:

- ຊ່ວຍທຳການຕັດສິນໃຈກ່ຽວກັບການປິ່ນປົວສຸຂະພາບຂອງທ່ານ, ລວມທັງການປະຕິເສດການປິ່ນປົວ.
- ຖືກແຈ້ງບອກກ່ຽວກັບທາງເລືອກຕ່າງໆໃນການປິ່ນປົວທັງໝົດທີ່ມີໃວ້ໃຫ້, ບໍ່ວ່າຈະເປັນມູນຄ່າເທົ່າໃດກໍຕາມ.
- ໄດ້ຮັບການບໍຣິການປິ່ນປົວທີ່ບໍ່ຕ້ອງໄດ້ລໍຖ້າດົນເກີນໄປ.
- ຖືກເຮັດນຳດ້ວຍຄວາມນັບຖື ແລະ ກຽດສັກສີ. ການແບ່ງແຍກຊົນຊົ້ນວັນນະບໍ່ອະນຸຍາດໃຫ້ມີ. ຈະບໍ່ມີໃຜຈະຖືກເຮັດນຳແຕກຕ່າງ ຫລື ບໍ່ຍຸຕິທັມຍ້ອນວ່າຜິວພັນ, ສີສັນ, ເຊື້ອຊາດ ດັ້ງເດີມ, ເພດ,ເອກະລັກ ທາງເພດ, ຄວາມຊອບໃຈທາງເພດ, ອາຍຸ, ສາສະນາ, ລັດທິ ຫລື ຄວາມເສັຽ ອົງຄະຂອງເຂົາເຈົ້າ.
- ເວົ້າອອກມາໄດ້ຢ່າງເສຣີກ່ຽວກັບການປິ່ນປົວສຸຂະພາບຂອງທ່ານ ແລະ ຄວາມຂ້ອງໃຈໂດຍບໍ່ມີຜົນຮ້າຍຕ່າງໆແຕ່ຢ່າງໃດ.
- ໃຫ້ສິດທິສ່ວນຕົວຂອງທ່ານຖືກປົກປັອງໄວ້ ແລະ ໃຫ້ຣາຍຣະອຽດກ່ຽວກັບການປິ່ນປົວຂອງທ່ານປົກປິດໃວ້ເປັນຄວາມລັບ.
- ຖາມເອົາ ແລະ ໄດ້ຮັບໃບໂກປີຂອງບັນທຶກພະຍາບານ ຂອງທ່ານ.
- ຖາມເອົາ ແລະ ໃຫ້ມີການດັດແປງເຮັດໃສ່ບັນທຶກພະຍາບານຂອງທ່ານເມື່ອຕ້ອງການ.
- ຖາມເອົາ ແລະ ໄດ້ຮັບຣາຍຣະອຽດກ່ຽວກັບ:
  - » ການປິ່ນປົວສຸຂະພາບ ແລະ ການປິ່ນປົວທີ່ຖືກຄຸ້ມກັນຂອງທ່ານ.
  - » ຜູ້ໃຫ້ການປິ່ນປົວຂອງທ່ານ ແລະ ການສົ່ງຕໍ່ໄດ້ຖືກເຮັດແນວໃດ ໄປຫາຜູ້ຊ່ຽວ ານ ແລະ ຜູ້ໃຫ້ການພະຍາບານອື່ນໆ.
  - » ທາງເລືອກທຸກໆຢ່າງສຳລັບການປິ່ນປົວ ແລະ ເປັນຫຍັງທ່ານຈົ່ງ ໄດ້ຮັບຊະນິດການປິ່ນປົວແນວໃດແນວນຶ່ງສະເພາະ.
  - » ຈະຮ້ອງຂໍເອົາການຟັງຄວາມເປັນທັມໄດ້ແນວໃດຖ້າຫາກວ່າ ທ່ານບໍ່ເຫັນພ້ອມນຳຄຳຕັດສິນກ່ຽວກັບເງື່ອນໄຂຮັບເອົາແລະ ການຄຸ້ມກັນ.
- ໄດ້ຮັບການປິ່ນປົວສຸຂະພາບໂຣກຈິດແລະການໃຊ້ຢາເສັບຕິດ.
- ໄດ້ຮັບລາຍຊື່ຂອງເລກໂທຣະສັບສຳລັບພາວະສຸກເສີນ.
- ໄດ້ຮັບຄວາມຊ່ວຍເຫລືອໃນການຂຽນປະກອບໃບຟອມຄຳຊີ້ນຳແນວທາງລ່ວງຫນ້າ ຂອງສຸຂະພາບໂຣກຈິດ ແລະ ການພະຍາບານ.

ທ່ານມີຄວາມຮັບຜິດຊອບທີ່ຈະ:

- ຊ່ວຍທຳການຕັດສິນໃຈກ່ຽວກັບການປິ່ນປົວສຸຂະພາບຂອງທ່ານ, ລວມທັງການປະຕິເສດການປິ່ນປົວ.
- ຮັກສາການນັດຫມາຍຕ່າງໆ ແລະ ໄປຕົງເວລາ. ໃຫ້ໂທຫາຫ້ອງການຂອງຜູ້ໃຫ້ການປິ່ນປົວຂອງທ່ານຖ້າທ່ານຈະມາຮອດຊ້າ ຫລື ຖ້າຫາກວ່າທ່ານຕ້ອງໄດ້ຍົກເລີກໝາຍນັດ.
- ເອົາໃຫ້ຜູ້ໃຫ້ການປິ່ນປົວຂອງທ່ານຣາຍຣະອຽດທີ່ເຂົາເຈົ້າຕ້ອງການເພື່ອຈະຖືກຈ່າຍເງີນໃຫ້ສຳລັບການບໍຣິການປິ່ນປົວໃຫ້ແກ່ທ່ານ.
- ສະແດງຄວາມນັບຖືຕໍ່ຜູ້ໃຫ້ການພະຍາບານຂອງທ່ານໃຫ້ຄືກັນກັບທີ່ທ່ານຕ້ອງການ ຈາກເຂົາເຈົ້າ.
- ຖືເອົາບັດ Services Card ຂອງທ່ານມານຳໄປຫາຫມາຍນັດພົບຂອງທ່ານທຸກຽດທື່ອ.
- ໃຊ້ການປິ່ນປົວສຸຂະພາບເມື່ອເວລາທ່ານຕ້ອງການ.
- ຮູ້ຈັກບັນຫາສຸຂະພາບຂອງທ່ານ ແລະ ມີສ່ວນນຳໃນການເຮັດເປົ້າຫມາຍການປິ່ນປົວທີ່ຖືກຕົກລົງເຫັນພ້ອມນຳກັນຫລາຍເທົ່າທີ່ຈະເປັນໄປໄດ້.
- ເອົາຣາຍຣະອຽດອັນຄົບຖ້ວນໃຫ້ຜູ້ໃຫ້ການປິ່ນປົວກ່ຽວກັບສຸຂະພາບຂອງທ່ານເພື່ອວ່າ ທ່ານຈະສາມາດໄດ້ຮັບການປິ່ນປົວທີ່ທ່ານຕ້ອງການ.
- ປະຕິບັດຕາມຄຳຊີ້ນຳຂອງຜູ້ໃຫ້ການພະຍາບານຂອງທ່ານສຳລັບການປິ່ນປົວທີ່ທ່ານ ໄດ້ຕົກລົງເຫັນພ້ອມນຳ.
- ໃຊ້ການປິ່ນປົວສຸຂະພາບຢ່າງເຫມາະສົມ. ຖ້າຫາກວ່າ ທ່ານບໍ່ເຮັດ, ທ່ານຈະຖືກຈົດຊື່ເຂົ້າໃນໂຄງການ Patient Review and Coordination. ຢູ່ໃນໂຄງການອັນນີ້, ທ່ານຈະຖືກແຕ່ງ ຕັ້ງ ໃສ່ຜູ້ໃຫ້ການປະຖົມພະຍາບານຄົນນຶ່ງ, ຮ້ານຂາຍຢາບ່ອນນຶ່ງ, ຜູ້ອອກໃບສັ່ງຊື້ຢາສຳລັບຄວບຄຸມຢາ ເສບຕິດຄົນນຶ່ງ, ແລະ ໂຮງພະຍາບານບ່ອນນຶ່ງ ສຳລັບການປິ່ນປົວທີ່ບໍ່ແມ່ນສຸກເສີນ.
- ແຈ້ງບອກພວກເຮົາໂດຍທັນທີໂລດຖ້າຫາກວ່ານີການປ່ຽນແປງໃນຂະນາດຂອງຄອບຄົວຂອງທ່ານ (ເຊັ່ນວ່າການຖືພາຕັ້ງທ້ອງ, ການເກີດລູກ, ການຮັບເອົາມາເປັນລູກບຸນທັມ) ຫລື ສະພາບການຂອງທ່ານປ່ຽນແປງ (ເຊັ່ນວ່າທີ່ຢູ່ບ່ອນໃຫມ່, ການປ່ຽນແປງໃນຣາຍໄດ້, ການກາຍເປັນມີເງື່ອນໄຂໄດ້ຮັບ Medicare ຫລື ປະກັນພັຍແນວ ອື່ນ).
- ທວນຄືນຕໍ່ໃຫມ່ການຄຸ້ມກັນຂອງທ່ານແຕ່ລະປີໂດຍການໃຊ້ແວບໄຊທ້ຂອງ Washington Healthplanfinder ຢູ່ທີ່ **www.wahealthplanfinder.org** ຫລືແວບໄຊທ້ຂອງ Washington Connection ຢູ່ທີ່ **www.washingtonconnection.org**. ທ່ານຍັງຈະໃຊ້ແວບໄຊທ້ນີ້ໄດ້ອີກຄືກັນເພື່ອຈະລາຍງານການປ່ຽນແປງຕໍ່ບັນຊີຂອງທ່ານ.

ຈະໄດ້ຄຳຕອບຕໍ່ຄຳຖາມຂອງທ່ານຢູ່ໃສ

ຖ້າຫາກວ່າທ່ານມີຄຳຖາມແນວໃດກ່ຽວກັບ…	ຕິດຕໍ່ຫາ…
• ເງື່ອນໄຂໄດ້ຮັບການບໍລິການປິ່ນປົວສຸຂະພາບ • ບັດບໍລິການ Services card • ການເລືອກເອົາຜູ້ໃຫ້ການປິ່ນປົວ • ການບໍລິການປິ່ນປົວທີ່ຖືກຄຸ້ມກັນ	ຜະແນກປະຊາສໍພັນຂອງ Apple Health ໄດ້ທີ່ເລກ 1-800-562-3022 ແລະ ເລືອກເອົາທາງເລືອກ 3 ສຳລັບ Client Services ຫລື ສົ່ງຄຳຖາມຂອງທ່ານໄປທີ່ **https://fortress.wa.gov/hca/p1contactus**, ຫລື ເບິ່ງແວບໄຊທ໌ຂອງພວກເຮົາໄດ້ທີ່: **https://www.waproviderone.org/client**.
• ການປ່ຽນແປງຕໍ່ຂໍ້ມູນຊື່ຂອງທ່ານ, ເຊັ່ນວ່າ: ທີ່ຢູ່, ລາຍໄດ້, ສະພາບແຕ່ງງານ, ການຖືພາຕັ້ງທ້ອງ, ການເກີດ, ຫລື ການຮັບເອົາໄປລ້ຽງລູກບຸນທັມ.	ການຄຸ້ມກັນສຳລັບເດັກນ້ອຍ,ຜູ້ໃຫຍ່ສ່ວນບຸກຄົນ,ຜູ້ຍິງຖືພາຕັ້ງທ້ອງ,ພໍແມ່/ຜູ້ເບິ່ງແຍງດູແລ: **www.wahealthplanfinder.org** ຫລືໂທຫາເລກ 1-855-923-4633 (TRS: 711) ການຄຸ້ມກັນສຳລັບບຸກຄົນຜູ້ທີ່ມີອາຍຸແກ່,ຕາບອດ,ຫລືເສັ້ນອົງຄະຫລືຕ້ອງການການບໍລິການຣະຍະຍາວແລະການຊ່ວຍເຫລືອ: **www.washingtonconnection.org** ຫລືໂທຫາເລກ 1-877-501-2233 (TRS: 711)

ແຫລ່ງຊ່ວຍເຫລືອແວ໋ບຂອງ **Apple Health**

Washington Apple Health (Medicaid)	**www.hca.wa.gov/apple-health**
Washington Healthplanfinder	**www.wahealthplanfinder.org**
Washington Connection	**www.washingtonconnection.org**

ໝາຍເຫດສຳລັບຄວາມລັບສ່ວນຕົວ

ບັດ Services Card ຂອງທ່ານບໍ່ໄດ້ບັນຈຸຣາຍຣະອຽດສ່ວນຕົວຈັກຢ່າງຍົກເວັ້ນແຕ່ຊື່ຂອງທ່ານ,ເລກ ProviderOne ຂອງທ່ານ,ແລະວັນທີເຣີ່ມອອກມາ. ອັນນີ້ຈະຮັກສາຄວາມລັບສ່ວນຕົວຂອງທ່ານຖ້າຫາກວ່າບັດໄດ້ຖືກເສັ້ຽໄປຫລືອະໂມຍໄປ. Health Care Authority (HCA) ຈະບໍ່ຕິດຕໍ່ໄປຫາທ່ານໂດຍກົງໂລດຈັກເທື່ອເພື່ອຈະຂໍເອົາຣາຍຣະອຽດສ່ວນຕົວຂອງທ່ານເພື່ອຈະໄດ້ຫລືເຣັດບັດ Services Card ໃບໃຫມ່ແທນ. **ຢ່າສົ່ງບອກຣາຍຣະອຽດສ່ວນຕົວຈັກເທື່ອ,ເຊັ່ນວ່າເລກຄວາມປອດພັຍຂອງສັງຄົມ,ໃຫ້ແກ່ຄົນໃດຄົນນຶ່ງຜູ້ທີ່ໂທຫາຫລືສົ່ງອີແມລ໌ໄປຫາທ່ານຮ້ອງຂໍເອົາສິ່ງເຫລົ່ານີ້.**

HCA ໃຊ້ແລະແລກປ່ຽນຣາຍຣະອຽດກ່ຽວກັບສຸຂະພາບທີ່ຖືກປົກປ້ອງນຳຜູ້ໃຫ້ການປິ່ນປົວສຸຂະພາບຂອງທ່ານເພື່ອຈະເອົາສະວັດດີການສຸຂະພາບໃຫ້;ເພື່ອຈະທຳການປິ່ນປົວ,ການຈ່າຍເງິນ,ແລະການດຳເນີນກິຈການປິ່ນປົວສຸຂະພາບ;ແລະສຳລັບເຫດຜົນອື່ນໆທີ່ຖືກອະນຸຍາດແລະຖືກບັ່ງໂດຍກົດໝາຍ.ແຕ່ວ່າ HCA ໄດ້ຖືກບັ່ງໃຫ້ຮັກສາຣາຍຣະອຽດກ່ຽວກັບສຸຂະພາບຂອງທ່ານໄວ້ເປັນຄວາມລັບສ່ວນຕົວ.

ເພື່ອຈະອ່ານເບິ່ງນະໂຍບາຍຄວາມລັບສ່ວນຕົວຂອງ HCA ຈົ່ງໄປທີ່ **www.hca.wa.gov** ແລະບີບໃສ່ "Privacy" ຢູ່ທາງລຸ່ມຂອງໜ້ານີ້.

Washington State Health Care Authority

P.O. Box 42719
Olympia, WA 98504-2719

HCA 19-065 LA (10/19) Laotian